ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທສກ ອຸດົມໄຊ ເລັ່ງແກ້ພິດໂຄວິດ ຕາມນະໂຍບາຍຂອງລັດຖະບານ



ທະນາຄານສົ່ງເສີມກະສິກຳ ສາຂາ ອຸດົມໄຊ (ທສກ.ອຊ) ເຮັດໜ້າທີ່ທຸລະກຳການເງິນ ຕິດພັນກັບນະໂຍບາຍຂອງພັກ ແລະ ລັດຖະບານ ເພື່ອໃຫ້ປະຊາຊົນ, ຜູ້ປະກອບການໄດ້ມີທຶນຮອນເຂົ້າໃນການຜະລິດ, ສ້າງເສດຖະກິດຄອບຄົວ ໂດຍສະເພາະໃນພາກກະສິກຳ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງບັນດາເມືອງ ແລະ ແຂວງອຸດົມໄຊ; ມາຮອດປະຈຸບັນນີ້, ທສກ.ອຊ ມີແຫຼ່ງທຶນ 260 ຕື້ກີບ ໂດຍສ່ວນໃຫຍ່ໄດ້ສະໜອງແຫຼ່ງທຶນໃນຂະແໜງກະສິກຳ 74% ຂອງຍອດສິນເຊື່ອທັງໝົດ; ອັນພົ້ນເດັ່ນ ໄດ້ສະໜອງແຫຼ່ງທຶນເກັບຊື້ຜົນຜະລິດກະສິກຳ; ຊຸກຍູ້ສົ່ງເສີມການປູກພືດໄລຍະສັ້ນທີ່ເປັນສິນຄ້າຈຳໜ່າຍພາຍໃນ-ຕ່າງປະເທດ ໃນນີ້ແມ່ນໄດ້ສະໜອງໃຫ້ໂດຍກົງຕໍ່ນັກທຸລະກິດ-ຜູ້ປະກອບການທີ່ເຮັດແທ້ທຳຈິງ, ມີຕົ້ນໂຕ ໂດຍໄດ້ມີການວິເຄາະຂໍ້ມູນລະອຽດຮອບຄອບ ໂດຍສະເພາະສົ່ງອອກສິນຄ້າປະເພດພືດໄປ ສປ ຈີນ ໂດຍຜ່ານດ່ານສາກົນ ບໍ່ເຕັນ (ຫຼວງນໍ້າທາ); ນອກນີ້, ຍັງສະໜອງແຫຼ່ງທຶນໃຫ້ຜູ້ປະກອບການລ້ຽງໝູ-ລ້ຽງປາ ແລະ ຂະແໜງອື່ນຕື່ມອີກ.

ທ່ານ ອິນປອນ ຄົມວິຈິດ ຫົວໜ້າ ທສກ.ອຊ ໄດ້ຢືນຢັນຫຼ້າສຸດໃນການແກ້ໄຂລູກຄ້າຂອງຕົນ ທີ່ໄດ້ຮັບຜົນກະທົບຈາກພະຍາດອັກເສບປອດໄດ້ລະບາດຈາກເຊື້ອຈຸລະໂລກສາຍພັນໃໝ່ ໂຄວິດ-19 ຊຶ່ງພະຍາດດັ່ງກ່າວ ໄດ້ແຜ່ລະບາດໃນທ້າຍປີ 2019 ເຮັດໃຫ້ລູກຄ້າຂອງ ທສກ ໄດ້ຮັບຜົນກະທົບໜັກພໍສົມຄວນ; ຕໍ່ບັນຫາດັ່ງກ່າວ: ສາຂາ ທສກ.ອຊ ກໍ່ໄດ້ປັບປຸງໂຄງສ້າງໜີ້ ຮັກສາຊັ້ນໜີ້ ເດີມ, ເລື່ອນການຊຳລະຕົ້ນທຶນຄົບງວດ, ໄກ່ຄືບສັນຍາ, ປັບຫຼຸດອັດຕາດອກເບ້ຍ ແລະ ເລື່ອນການຊຳລະດອກເບ້ຍເປັນເດືອນ ມາຊຳລະເປັນງວດປີ ໂດຍໃນນີ້ແມ່ນໄດ້ປັບປຸງໂຄງສ້າງໜີ້ ເລື່ອນການຊຳລະຕົ້ນທຶນຄົບງວດ, ໄກ່ຄືບສັນຍາທັງໝົດຈຳນວນ 9 ລາຍການ ເປັນຈຳນວນເງິນທັງໝົດ 7.2 ຕື້ກີບ; ໄດ້ປັບຫຼຸດອັດຕາດອກເບ້ຍທັງໝົດ 5 ລາຍການ, ເປັນຈຳນວນເງິນທັງໝົດ 16 ຕື້ກີບ; ໄດ້ເລື່ອນການຊຳລະດອກເບ້ຍທັງໝົດ 5 ລາຍການເປັນຈຳນວນເງິນທັງໝົດ 13 ຕື້ກີບ, ແລະ ຍັງໄດ້ນຳສະເໜີຂໍທຶນໃຫ້ລູກຄ້າ ທີ່ໄດ້ຮັບຜົນກະທົບເປັນຕົ້ນນະໂຍບາຍສິນເຊື່ອເພື່ອແກ້ໄຂຜົນກະທົບຈາກພະຍາດດັ່ງກ່າວຈຳນວນ 4 ລາຍ ເປັນເງິນທັງໝົດ 8 ຕື້ກີບ, ( ຍັງລໍຖ້າອະນຸມັດ ). ນອກຈາກນີ້, ຍັງໄດ້ຮັບໃບຄຳຮ້ອງ 4 ລາຍການ ຈຳນວນເງິນ 34 ຕື້ກີບ ຊຶ່ງຂະນະນີ້ແມ່ນກຳລັງລົງເກັບກຳຂໍ້ມູນ.





ເຖິງແນວໃດກໍ່ຕາມ, ທ່ານ ອິນປອນ ຄົມວິຈິດ ຫົວໜ້າ ທສກ.ອຊ ຍັງໄດ້ຊຸກຍູ້ ແລະ ນຳພາພະນັກງານ ລົງຮາກຖານໂຕຈິງ ໂດຍສົມທົບກັບອຳນາດການປົກຄອງ ແລະ ຜູ້ປະກອບການ (ລູກຄ້າ) ພະຍາຍາມແກ້ໄຂບັນຫາດັ່ງກ່າວໃຫ້ດີທີ່ສຸດ ບົນພື້ນຖານການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານເຮົາ ໂດຍສະເພາະແມ່ນການຊີ້ນຳຂອງຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ, ສະພາບໍລິຫານ-ຄະນະອຳນວຍການ ທສກ ເພື່ອເຮັດແນວໃດໃຫ້ບັນຫາດັ່ງກ່າວໄດ້ຮັບການແກ້ໄຂຢ່າງຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ